ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 17 ຫາ 21 ມິຖຸນາ 2024




ກອງປະຊຸມຄະນະກຳມະການຄ້ຳປະກັນສະບຽງອາຫານອາຊຽນ ຄັ້ງທີ 44

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ກອງປະຊຸມຄະນະກຳມະການຄໍ້າປະກັນສະບຽງ ອາຫານອາຊຽນ ຄັ້ງທີ 44

ໂດຍ: ພະແນກ ໂຄສະນາ ແລະ ຂ່າວສານ

ເນື່ອງໃນ ວາລະການໝູນວຽນຄົບຮອບຕາມ ພັນທະຂອງບັນດາປະເທດ ສາມະຊິກ ອາຊຽນ, ເຊິ່ງ ໃນປີ 2024 ນີ້, ແມ່ນ ສປປ ລາວ ໄດ້ຮັບກຽດເປັນເຈົ້າພາບຈັດກອງປະຊຸມ. ສະນັ້ນ, ໃນລະຫວ່າງວັນທີ 5-6 ມິຖຸນາ 2024 ກະຊວງກະສິກຳ ແລະ ປ່າໄມ້ ສປປ ລາວ ຕາງໜ້າໂດຍກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າພາບຈັດກອງປະຊຸມ ຄະນະກຳມະການຄໍ້າປະກັນສະບຽງອາຫານ ອາຊຽນ ຄັ້ງທີ 44th (44th ASEAN Food Security Reserve Board "AFSRB" ) ຢູ່ທີ່ໂຮງແຮມ ອຳມະຣິ, ເມືອງ ວັງວຽງ, ແຂວງ ວຽງຈັນ ໂດຍການ ເປັນປະທານຂອງ ທ່ານ ບຸນຈັນ ກົມບຸນຍະສິດ, ຫົວໜ້າກົມປູກຝັງ, ໂດຍມີຜູ້ເຂົ້າຮ່ວມທັງໝົດ 71 ທ່ານມາຈາກບັນດາປະເທດສະມາຊິກອາຊຽນ ແລະ ກອງເລຂາອາຊຽນ, ແລະ ຜູ້ແທນຝ່າຍລາວຈາກ ບັນດາກົມ ແລະ ກະຊວງກ່ຽວຂ້ອງ. ຈຸດປະສົງ ໃນ ກອງປະຊຸມຄັ້ງນີ້ ເພື່ອແລກປ່ຽນ ແລະ ແບ່ງປັນຂໍ້ມູນ ກ່ຽວກັບການຜະລິດສະບຽງອາຫານ ແລະ ການ ສະໜອງສະບຽງອາຫານຢູ່ໃນໂລກ, ອາຊຽນ ແລະ ບັນດາປະເທດສະມາຊິກອາຊຽນ ພ້ອມດຽວກັນນັ້ນ ກອງປະຊຸມຍັງໄດ້ກຳນົດທິດທາງ ແລະ ວາງກອບ ການຮ່ວມມືດ້ານການຜະລິດ ແລະ ການສະໜອງ ອາຫານໃນອາຊຽນເພື່ອຮັກສາດ້ານຄວາມໝັ້ນຄົງ ດ້ານສະບຽງອາຫານຢູ່ໃນອາຊຽນກໍ່ຄືບັນດາປະເທດ ສະມາຊິກ.

ທ່ານ ບຸນຈັນ ກົມບຸນຍະສິດ, ຫົວໜ້າກົມ ປູກຝັງ ໄດ້ກ່າວມີຄຳເຫັນຕໍ່ກອງປະຊຸມໃຫ້ຮູ້ວ່າ: ວຽກງານຄໍ້າປະກັນດ້ານສະບຽງອາຫານ, ຄວາມ ປອດໄພດ້ານສະບຽງອາຫານ ແລະ ໂພຊະນາການ ແມ່ນວຽກງານທີ່ສຳຄັນຫຼາຍ ເຊິ່ງໄດ້ຮັບການຍົກ ອອກເປັນຫົວຂໍ້ຢູ່ກອງປະຊຸມ ເວທີປາໄສ, ສຳມະນາຕ່າງໆ ທ່ານຍົກໃຫ້ເຫັນວ່າ: ການຜະລິດສະບຽງ ອາຫານໄດ້ປະເຊີນກັບສິ່ງທ້າທາຍຢ່າງຫຼວງຫຼາຍ ເປັນຕົ້ນແມ່ນໄພທຳມະຊາດ, ການປ່ຽນແປງດ້ານ

ການເມືອງ ແລະ ເສດຖະກິດ-ສັງຄົມ ໃນລະດັບພາກພື້ນ ແລະ ສາກົນ. ສະນັ້ນ, ຈຶ່ງມີຄວາມຈຳເປັນທີ່ ທຸກພາກສ່ວນທີ່ກ່ຽວຂ້ອງ ຕ້ອງສຸມໃສ່ ແລະ ຕັ້ງໜ້າປະຕິບັດລະບົບການຜະລິດສະບຽງອາຫານ ເພື່ອຄ້ຳປະກັນດ້ານສະບຽງອາຫານ, ໂພຊະນາການໃນພາກພື້ນ ແລະ ບັນດາປະເທດສະມາຊິກອາຊຽນ. ເພື່ອບັນລຸເປົ້າໝາຍດັ່ງກ່າວ, ອາຊຽນຕ້ອງເພີ່ມທະວີຍົກລະດັບການຜະລິດກະສິກຳທັງດ້ານປະລິມານ ແລະ ຄຸນນະພາບ ໂດຍຜ່ານການພັດທະນາ, ປັບປຸງເຕັກໂນໂລຊີ ແລະ ນຳໃຊ້ນະວັດຕະກຳທີ່ທັນໄໝໃໝ່; ພ້ອມທັງອຳນວຍຄວາມສະດວກໃຫ້ແກ່ການຄ້າ ແລະ ພັດທະນາລະບົບຕ່ອງໂສ້ການສະໜອງສະບຽງອາຫານ ເພື່ອໃຫ້ທຸກກຸ່ມຄົນ ສາມາດເຂົ້າເຖິງສະບຽງອາຫານ ໂດຍສະເພາະກຸ່ມທີ່ດ້ອຍໂອກາດໃນສັງຄົມ. ໃນກອງປະຊຸມໄດ້ຮັບຟັງການນຳສະເໜີ ບົດລາຍງານຂອງປະທານ ຄະນະກຳມະການຄ້ຳປະກັນສະບຽງອາຫານ ອາຊຽນ ຄັ້ງທີ 43 ກ່ຽວກັບກິດຈະກຳ ສຳລັບປີ 2023-2024, ບົດລາຍງານການປະຕິບັດຂອບການຄ້ຳປະກັນສະບຽງອາຫານ ປະສົມປະສານອາຊຽນ ແລະ ແຜນຍຸດທະສາດ ການປະຕິບັດການຄ້ຳປະກັນສະບຽງອາຫານ ລວມທັງບົດລາຍງານກ່ຽວກັບ ສະພາບການສະໜອງ ແລະ ຄວາມຕ້ອງການສຳລັບສິນຄ້າທີ່ສຳຄັນໃນແຕ່ລະປະເທດສະມາຊິກອາຊຽນຕື່ມອີກ.

ໃນຕອນທ້າຍຂອງກອງປະຊຸມ ຕາມການໝູນວຽນ ແລະ ຕົກລົງເຫັນດີ ໃນບັນດາປະເທດສາມະຊິກ ຈຶ່ງໄດ້ສະເໜີໃຫ້ປະເທດ ມາເລເຊຍ ເປັນປະເທດເຈົ້າພາບຈັດກອງປະຊຸມ ຄັ້ງທີ 45 ໃນປີ 2025.




ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສິງຄານ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສີມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳພອນ ໄຊຍະລາດ

ຕິດຕໍ່ ແລະ ລິງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;